washington healthplanfinder

click. compare. covered.

# ພື້ນຖານກ່ຽວກັບ ປະກັນສຸຂະພາບ

ທຸກສິ່ງທີ່ທ່ານຈຳເປັນຕ້ອງຮູ້ເພື່ອຮັບເອົາການຄຸ້ມຄອງ



# ເນື້ອຫາ


| | |
|---|---|
| 4 | *Washington Healthplanfinder* |
| 5 | ຄຳສັບສຳຄັນ |
| 6-7 | ພື້ນຖານແຜນປະກັນສຸຂະພາບ |
| 8 | ສິດຜົນປະໂຫຍດ |
| 9 | ການຊ່ວຍເຫຼືອທາງການເງິນ |
| 10 | Washington Apple Health (Medicaid) |
| 11 | ການເລືອກແຜນປະກັນສຸຂະພາບ |
| 12-14 | Cascade Care |
| 15-16 | ສະໝັກຂໍໄດ້ເມື່ອໃດ |
| 17 | ລາຍການກວດກາສຳລັບການສະໝັກຂໍ |
| 18-23 | ວິທີການສະໝັກຂໍ |
| 23 | ຕິດຕາມພວກເຮົາ! |

# *Washington Healthplanfinder*

## *Washington Healthplanfinder* ແມ່ນຫຍັງ?

*Washington Healthplanfinder* ແມ່ນບ່ອນທີ່ສາມາດເລືອກຊື້ປະກັນສຸຂະພາບຜ່ານທາງອອນລາຍໃນລັດວໍຊິງຕັນ. ປະຊາຊົນໃນລັດວໍຊິງຕັນສາມາດຊອກຫາແຜນປະກັນສຸຂະພາບທີ່ເໝາະສົມສຳລັບພວກເຂົາໂດຍຜ່ານພວກເຮົາ.

*Washington Healthplanfinder* ສະເໜີແຜນປະກັນ ແລະ ຊ່ວຍປະຢັດເງິນ ເຊິ່ງບໍ່ມີໃຫ້ໃນບ່ອນອື່ນ. ແຜນປະກັນ Cascade Care ໃຫ້ບໍລິການ ແລະ ຊ່ວຍປະຢັດເງິນໄດ້ຫຼາຍກວ່າແຜນປະກັນອື່ນອີກຫຼາຍ. ໂຄງການຊ່ວຍປະຢັດເງິນ ເຊັ່ນ: ເຄຣດິດອາກອນ ສາມາດຫຼຸດຕົ້ນທຶນເບ້ຍປະກັນຂອງທ່ານ. ທ່ານຈະບໍ່ພົບເຫັນສິດຜົນປະໂຫຍດເຫຼົ່ານີ້ໃນບ່ອນອື່ນ.

## ຂ້າພະເຈົ້າຈະໃຊ້ *Washington Healthplanfinder* ໄດ້ແນວໃດ?

ມັນງ່າຍທີ່ຈະສະໝັກຂໍແຜນປະກັນສຸຂະພາບກັບ *Washington Healthplanfinder*. ທ່ານສາມາດລົງທະບຽນ ແລະ ເລືອກຊື້ໃນ wahealthplanfinder.org, ແອັບ WAPlanfinder ຫຼື ທາງໂທລະສັບ.

ດາວໂຫຼດແອັບ
**WAPlanfinder**

ໄປທີ່ເວບໄຊຂອງພວກເຮົາ
**wahealthplanfinder.org**

## ມີຄຳຖາມບໍ? ໂທຫາຝ່າຍໃຫ້ບໍລິການລູກຄ້າ.

ສູນໃຫ້ບໍລິການລູກຄ້າຂອງພວກເຮົາໃຫ້ການຊ່ວຍເຫຼືອໄດ້ຫຼາຍກວ່າ 200 ພາສາ.

ໂທລະສັບ: **1-855-923-4633**
TTY: **1-855-627-9604**

# ຄຳສັບສຳຄັນ

ຄຳສັບເຫຼົ່ານີ້ມີຄວາມສຳຄັນທີ່ຈະເຮັດໃຫ້ທ່ານເຂົ້າໃຈແຜນປະກັນສຸຂະພາບຂອງທ່ານ.

### ▶ ເບ້ຍປະກັນ

ເບ້ຍປະກັນຂອງທ່ານຄືຈຳນວນເງິນທີ່ທ່ານຈ່າຍໃນແຕ່ລະເດືອນສຳລັບແຜນປະກັນສຸຂະພາບຂອງທ່ານ. ທ່ານຕ້ອງຈ່າຍເບ້ຍປະກັນຂອງທ່ານ ເຖິງແມ່ນວ່າທ່ານບໍ່ໄດ້ຮັບການບໍລິການດູແລເບິ່ງແຍງສຸຂະພາບໃດເລີຍ.

### ▶ ຕົ້ນທຶນແບ່ງຈ່າຍ

ຕົ້ນທຶນແບ່ງຈ່າຍໝາຍເຖິງຈຳນວນຕົ້ນທຶນການດູແລເບິ່ງແຍງສຸຂະພາບທີ່ທ່ານຈ່າຍ. ຄຳສັບນີ້ລວມເຖິງເງິນສ່ວນທຳອິດ, ເງິນປະກັນໄພຮ່ວມ ແລະ ເງິນຈ່າຍຮ່ວມ.

### ▶ ເງິນສ່ວນທຳອິດ

ເງິນສ່ວນທຳອິດຂອງທ່ານແມ່ນຈຳນວນເງິນທີ່ທ່ານຕ້ອງຈ່າຍສຳລັບການດູແລເບິ່ງແຍງກ່ອນທີ່ແຜນປະກັນສຸຂະພາບຂອງທ່ານຈະເລີ່ມຮ່ວມຈ່າຍຕົ້ນທຶນ. ຈຳນວນເງິນສ່ວນທຳອິດຂອງທ່ານຈະເລີ່ມຄືນໃໝ່ໃນຕົ້ນປີຂອງແຕ່ລະປີ.

### ▶ ເງິນຈ່າຍຮ່ວມ

ເງິນຈ່າຍຮ່ວມແມ່ນຈຳນວນເງິນທີ່ທ່ານຈ່າຍສຳລັບການບໍລິການດູແລເບິ່ງແຍງສຸຂະພາບທີ່ຢູ່ໃນການຄຸ້ມຄອງ. ເງິນຈ່າຍຮ່ວມຂອງທ່ານຈະຄົບກຳນົດ ເມື່ອທ່ານໄດ້ຮັບການບໍລິການ.

### ▶ ເງິນປະກັນໄພຮ່ວມ

ເງິນປະກັນໄພຮ່ວມແມ່ນສ່ວນຂອງທ່ານໃນຕົ້ນທຶນການບໍລິການດູແລເບິ່ງແຍງສຸຂະພາບທີ່ຢູ່ໃນການຄຸ້ມຄອງ. ທ່ານເລີ່ມຈ່າຍເງິນປະກັນໄພຮ່ວມ ຫຼັງຈາກທີ່ທ່ານໄດ້ຈ່າຍເງິນສ່ວນທຳອິດສຳລັບແຜນປະກັນສຸຂະພາບຂອງທ່ານ.

### ▶ ເງິນຕົວຈິງ

ຕົ້ນທຶນເງິນຕົວຈິງຄືເງິນທີ່ທ່ານຈ່າຍສຳລັບການດູແລເບິ່ງແຍງສຸຂະພາບຂອງທ່ານ. ພວກມັນສາມາດລວມເຖິງເງິນສ່ວນທຳອິດ, ເງິນປະກັນໄພຮ່ວມ ແລະ ເງິນຮ່ວມຈ່າຍຂອງທ່ານ. ຈຳນວນເງິນໃດໜຶ່ງທີ່ບໍ່ໄດ້ຢູ່ໃນການຄຸ້ມຄອງໂດຍແຜນປະກັນສຸຂະພາບຂອງທ່ານແມ່ນຕົ້ນທຶນເງິນຕົວຈິງ.

### ▶ ເຄືອຂ່າຍ

ເຄືອຂ່າຍແມ່ນລາຍຊື່ຜູ້ໃຫ້ບໍລິການທີ່ແຜນປະກັນສຸຂະພາບຂອງທ່ານຄຸ້ມຄອງ. ຜູ້ໃຫ້ບໍລິການໃນເຄືອຂ່າຍແມ່ນໄດ້ຮັບການອະນຸມັດໂດຍແຜນປະກັນສຸຂະພາບຂອງທ່ານ. ຜູ້ໃຫ້ບໍລິການນອກເຄືອຂ່າຍແມ່ນບໍ່ໄດ້ຮັບການອະນຸມັດໂດຍແຜນປະກັນສຸຂະພາບຂອງທ່ານ.

# ພື້ນຖານແຜນປະກັນ ສຸຂະພາບ

## ແຜນປະກັນສຸຂະພາບແມ່ນຫຍັງ?

ທ່ານຊື້ແຜນປະກັນສຸຂະພາບໃນແຕ່ລະປີ ໃນກໍລະນີທີ່ທ່ານ ຫຼື ຄອບຄົວຂອງທ່ານຕ້ອງການ ການດູແລເບິ່ງແຍງສຸຂະພາບ. ບໍລິສັດປະກັນໄພຂອງທ່ານຈ່າຍສ່ວນໜຶ່ງສໍາລັບຕົ້ນທຶນການ ດູແລເບິ່ງແຍງສຸຂະພາບ ເມື່ອທ່ານມີແຜນປະກັນສຸຂະພາບ.

## ເປັນຫຍັງຂ້າພະເຈົ້າຈຶ່ງຕ້ອງການແຜນປະກັນສຸຂະພາບ?

ແມ່ນແຕ່ຄົນທີ່ມີສຸຂະພາບດີກໍໃຊ້ລະບົບການດູແລເບິ່ງແຍງສຸຂະພາບ. ການຮັບແຜນປະກັນສຸຂະພາບຈະຮັບປະກັນວ່າທ່ານສາມາດຈ່າຍຕົ້ນທຶນການດູແລເບິ່ງແຍງສຸຂະພາບ ເມື່ອທ່ານມີແຜນປະກັນສຸຂະພາບ. ທ່ານສາມາດໄດ້ຮັບການດູແລປ້ອງກັນໂຣກເພື່ອໃຫ້ທ່ານສືບຕໍ່ມີສຸຂະພາບທີ່ດີ ຖ້າທ່ານມີສຸຂະພາບທີ່ດີຢູ່ແລ້ວ. ທ່ານສາມາດຮັບເອົາການປິ່ນປົວໂດຍໄວ ຖ້າສຸຂະພາບຂອງທ່ານບໍ່ດີ. ແຜນປະກັນສຸຂະພາບເຮັດໃຫ້ເຂົ້າເຖິງການດູແລເບິ່ງແຍງທາງການແພດໃນລາຄາທີ່ສາມາດຈ່າຍໄດ້ ເມື່ອທ່ານຕ້ອງການການດູແລເບິ່ງແຍງ.



### ແຜນປະກັນສຸຂະພາບ ສໍາລັບອະນາຄົດ

ທ່ານບໍ່ຮູ້ວ່າທ່ານຈໍາເປັນຕ້ອງເຂົ້າພົບທ່ານໝໍໃນເມື່ອໃດ. ການມີແຜນປະກັນສຸຂະພາບຈະຮັບປະກັນວ່າທ່ານສາມາດຈ່າຍສໍາລັບການດູແລເບິ່ງແຍງທາງການແພດ ເມື່ອທ່ານຕ້ອງການການດູແລເບິ່ງແຍງ.

ເຖິງແມ່ນວ່າທ່ານມີສຸຂະພາບທີ່ດີ, ແຜນປະກັນສຸຂະພາບຂອງທ່ານກໍຊ່ວຍໃຫ້ທ່ານສືບຕໍ່ມີສຸຂະພາບທີ່ດີ.



### ລົງທຶນໃນສຸຂະພາບຂອງທ່ານ

ຕົ້ນທຶນການດູແລເບິ່ງແຍງສຸຂະພາບສາມາດມີລາຄາທີ່ແພງ ຖ້າບໍ່ມີແຜນປະກັນສຸຂະພາບ. ການເຂົ້າພົບທ່ານໝໍເປັນປະຈໍາກໍເຮັດໃຫ້ລາຄານັ້ນເພີ່ມຂຶ້ນໄວ. ຕົ້ນທຶນການດູແລເບິ່ງແຍງສໍາລັບການບາດເຈັບກະທັນຫັນ ຫຼື ການເຈັບປ່ວຍທີ່ຮ້າຍແຮງສາມາດເຮັດໃຫ້ເງິນເກັບຂອງທ່ານໝົດໄປ.

ທ່ານສາມາດປະຢັດເງິນໄດ້ຫຼາຍໃນອະນາຄົດ ໂດຍຈ່າຍເງິນພຽງເລັກນ້ອຍສໍາລັບແຜນປະກັນສຸຂະພາບໃນມື້ນີ້.

## ແມ່ນຫຍັງຄືແຜນປະກັນການດູແລສຸຂະພາບໃນລາຄາບໍ່ແພງ?

ເມື່ອມີການຜ່ານກົດໝາຍວ່າດ້ວຍການດູແລສຸຂະພາບໃນລາຄາບໍ່ແພງ, ລັດວໍຊິງຕັນໄດ້ສ້າງ *Washington Healthplanfinder*. ເປົ້າໝາຍຂອງກົດໝາຍວ່າດ້ວຍການດູແລສຸຂະພາບໃນລາຄາບໍ່ແພງແມ່ນເພື່ອເຮັດໃຫ້ຄ່າໃຊ້ຈ່າຍໃນການດູແລສຸຂະພາບຫຼຸດໜ້ອຍລົງ. ມີອີກຫຼາຍຄົນຈະສາມາດໄດ້ຮັບແຜນປະກັນສຸຂະພາບດ້ວຍຄ່າໃຊ້ຈ່າຍທີ່ໜ້ອຍ ຫຼື ບໍ່ມີເລີຍ. ສະຖານະການຂອງທ່ານອາດເຂົ້າເກນເງື່ອນໄຂສຳລັບ Washington Apple Health (Medicaid) ຫຼື ສິດທິປະໂຫຍດທີ່ຫຼຸດຈຳນວນເງິນທີ່ທ່ານຈ່າຍສຳລັບການຄຸ້ມຄອງປະກັນ.

ທ່ານສາມາດສະໝັກຂໍການຄຸ້ມຄອງສຸຂະພາບໂດຍບໍ່ເສຍຄ່າ ຫຼື ໂດຍມີຄ່າໃຊ້ຈ່າຍຕໍ່າຢູ່ wahealthplanfinder.org ແລະ WAPlanfinder app.

## ມັນຈະເກີດຫຍັງຂຶ້ນ ຖ້າຂ້າພະເຈົ້າບໍ່ມີແຜນປະກັນສຸຂະພາບ?

ທ່ານຈະຈ່າຍຕົ້ນທຶນການດູແລເບິ່ງແຍງທາງການແພດໃນຈຳນວນເຕັມ ຖ້າບໍ່ມີແຜນປະກັນສຸຂະພາບ. ລາຄາສຳລັບການສັກຢາປິ່ນປົວໄຂ້ຫວັດສາມາດຢູ່ທີ່ $50. ເພື່ອເຂົ້າຮັບການປິ່ນປົວໃນໂຮງໝໍເປັນເວລາສາມມື້, ທ່ານອາດໃຊ້ຈ່າຍເງິນຫຼາຍໝື່ນໂດລາ. ການປິ່ນປົວໂຣກມະເຮັງສາມາດເພີ່ມຈຳນວນໃຫ້ສູງເຖິງຫຼາຍແສນໂດລາ.

ທ່ານອາດຍັງໄດ້ຮັບບົດລົງໂທດທາງອາກອນ ຖ້າທ່ານບໍ່ມີການຄຸ້ມຄອງ. ໃນລັດວໍຊິງຕັນ, ທ່ານຈະມີການຄຸ້ມຄອງໜຶ່ງລາຍການສຳລັບແຕ່ລະຄົນໃນຄົວເຮືອນຂອງທ່ານ.

## ຕົ້ນທຶນການດູແລເບິ່ງແຍງແມ່ນຫຍັງ?

ນີ້ແມ່ນການປິ່ນປົວບາງຢ່າງທີ່ມັກເກີດຂຶ້ນ ແລະ ລາຄາຂອງພວກມັນ. ແຜນປະກັນສຸຂະພາບຂອງທ່ານສາມາດຊ່ວຍຈ່າຍສຳລັບຕົ້ນທຶນແບບນີ້ກັບທ່ານ.

| ການປິ່ນປົວ | ຕົ້ນທຶນ |
|---|---|
| ການຜ່າຕັດຫົວໃຈ | $78,585 |
| ການກວດເຕົ້ານົມດ້ວຍເອັກສະເຣ | $263 |
| ການຜ່າຕັດໄຂສັນຫຼັງ | $13,255 |
| ການສ່ອງກວດລຳໄສ້ໃຫຍ່ດ້ວຍກ້ອງ | $1,484 |
| ການຜ່າຕັດຄອດລູກ | $18,098 |
| ການເຂົ້າຮັບການດູແລເບິ່ງແຍງສຸກເສີນ | $181 |
| ການກວດສຸຂະພາບ (ສຳລັບໄວໜຸ່ມ) | $117 |
| ການເຂົ້າປິ່ນປົວໃນຫ້ອງສຸກເສີນ | $579 |

# ສິດຜົນປະໂຫຍດ

## ແຜນປະກັນສຸຂະພາບຄຸ້ມຄອງຫຍັງ?

ແຜນປະກັນສຸຂະພາບທັງໝົດປະກອບມີສິດຜົນປະໂຫຍດທີ່ຈໍາເປັນສິບຢ່າງສໍາລັບສຸຂະພາບ. ແຜນປະກັນບາງຢ່າງ ເຊັ່ນ: ແຜນປະກັນ Cascade Care ແມ່ນຈະຄຸ້ມຄອງຫຼາຍກວ່າ.

**ສິດຜົນປະໂຫຍດທີ່ຈໍາເປັນສໍາລັບສຸຂະພາບ**

- ການເຂົ້າພົບທ່ານໝໍ ແລະ ການເຂົ້າປິ່ນປົວຢູ່ໂຮງໝໍ
- ການເຂົ້າປິ່ນປົວໃນຫ້ອງສຸກເສີນ
- ການດູແລເບິ່ງແຍງແມ່
- ການບໍລິການສໍາລັບສຸຂະພາບຈິດ ແລະ ການປິ່ນປົວອາການເສບຕິດສານ
- ຢາຕາມແພດສັ່ງ
- ການບໍລິການເພື່ອຟື້ນຕົວ ເມື່ອທ່ານບາດເຈັບ
- ການກວດໃນຫ້ອງທົດລອງ
- ການບໍລິການເພື່ອປ້ອງກັນໂຣກ
- ການຈັດການອາການຊໍາເຮື້ອ
- ການດູແລເບິ່ງແຍງເດັກ

### Cascade Care

ທ່ານສາມາດເຂົ້າເຖິງການບໍລິການ ແລະ ປະຢັດເງິນໄດ້ຫຼາຍຂຶ້ນ ດ້ວຍແຜນປະກັນ Cascade Care.

### ຄຸນນະພາບການດູແລເບິ່ງແຍງ

ແຜນປະກັນສຸຂະພາບຫຼາຍລາຍການສະເໜີຄຸນນະພາບການດູແລເບິ່ງແຍງທີ່ສູງກວ່າສິ່ງທີ່ທ່ານໄດ້ຮັບເມື່ອທ່ານບໍ່ມີການຄຸ້ມຄອງ.

### ບໍ່ມີການປະຕິເສດ

ທ່ານຈະບໍ່ຖືກປະຕິເສດການຄຸ້ມຄອງ ເນື່ອງຈາກອາການທີ່ມີກ່ອນໜ້າແລ້ວ.

### ການດູແລເບິ່ງແຍງເພື່ອປ້ອງກັນໂຣກໂດຍບໍ່ເສຍຄ່າ

ການບໍລິການ ເຊັ່ນ: ການກວດສຸຂະພາບ ແລະ ການສັກວັກຊີນ ແມ່ນຢູ່ໃນການຄຸ້ມຄອງທັງໝົດ.

# ການຊ່ວຍເຫຼືອທາງການເງິນ

### ເຄຣດິດອາກອນແມ່ນຫຍັງ?

ເຄຣດິດອາກອນຫຼຸດຈຳນວນເງິນທີ່ທ່ານຈ່າຍສຳລັບແຜນປະກັນສຸຂະພາບຂອງທ່ານໃນແຕ່ລະເດືອນ. ລັດຖະບານເປັນຜູ້ຈ່າຍ ແລະ ໃຊ້ໄດ້ກັບເບ້ຍປະກັນໃນແຜນປະກັນສຸຂະພາບຂອງທ່ານ. ເຄຣດິດອາກອນແມ່ນມີໃຫ້ຜ່ານ *Washington Healthplanfinder* ເທົ່ານັ້ນ.

### ຜູ້ໃດສາມາດໄດ້ຮັບເຄຣດິດອາກອນ?

ຈຳນວນເຄຣດິດອາກອນທີ່ທ່ານຈະໄດ້ຮັບແມ່ນຂຶ້ນກັບລາຍຮັບຂອງທ່ານ ແລະ ຂະໜາດຄົວເຮືອນຂອງທ່ານ. ຍິ່ງຄົວເຮືອນຂອງທ່ານມີລາຍຮັບຕ່ຳສ່ຳໃດ, ທ່ານອາດເຂົ້າເກນເງື່ອນໄຂສຳລັບເຄຣດິດອາກອນຫຼາຍສ່ຳນັ້ນ. ເງິນຈຳນວນນີ້ແມ່ນຈະຖືກຄິດໄລ່ ເມື່ອທ່ານລົງທະບຽນ. ທ່ານອາດເຂົ້າເກນເງື່ອນໄຂສຳລັບເຄຣດິດອາກອນ ຖ້າສິ່ງເຫຼົ່ານີ້ເປັນຈິງ:

- ທ່ານບໍ່ເຂົ້າເກນເງື່ອນໄຂສຳລັບ Washington Apple Health (Medicaid) ຫຼື Medicare.
- ທ່ານບໍ່ມີປະກັນໄພຜ່ານວຽກຂອງທ່ານ ຫຼື ໂຄງການອື່ນຂອງລັດຖະບານ.
- ທ່ານເປັນພົນລະເມືອງຂອງສະຫະລັດ ຫຼື ຢູ່ໃນສະຫະລັດຢ່າງຖືກຕ້ອງຕາມກົດໝາຍ ແລະ ອາໄສຢູ່ໃນລັດວໍຊິງຕັນ.
- ຖ້າທ່ານແຕ່ງງານແລ້ວ,ທ່ານຈະບໍ່ຍື່ນແບບສະແດງລາຍການອາກອນສຳລັບສະຖານະຄູ່ແຕ່ງງານທີ່ຍື່ນອາກອນແຍກ (Married Filing Separately).

### ແມ່ນຫຍັງຄື Cascade Care Savings?

ໂຄງການ Cascade Care Savings ຫຼຸດຜ່ອນຕົ້ນທຶນເບ້ຍປະກັນແຜນປະກັນສຸຂະພາບຂອງທ່ານ. ຖ້າທ່ານເຂົ້າເກນເງື່ອນໄຂ, ລັດຈະຈ່າຍສ່ວນໜຶ່ງໃນເບ້ຍປະກັນຂອງທ່ານ.

### ຜູ້ໃດສາມາດໄດ້ຮັບ Cascade Care Savings?

ທ່ານອາດເຂົ້າເກນເງື່ອນໄຂສຳລັບ Cascade Care Savings ຖ້າສິ່ງເຫຼົ່ານີ້ເປັນຈິງ:

- ລາຍໄດ້ຂອງທ່ານຕ່ຳວ່າ 250% ຂອງລະດັບຄວາມທຸກຍາກທີ່ລັດຖະບານກາງກຳນົດ.
- ທ່ານບໍ່ເຂົ້າເກນເງື່ອນໄຂສຳລັບ Washington Apple Health (Medicaid) ຫຼື Medicare.
- ທ່ານໄດ້ລົງທະບຽນໃນແຜນກປະກັນ Cascade Care ເງິນ ຫຼື ຄຳ.
- ຖ້າທ່ານເຂົ້າເກນເງື່ອນໄຂສຳລັບເຄຣດິດອາກອນ, ທ່ານໄດ້ຍອມຮັບ ຈຳນວນເຕັມທີ່ທ່ານສາມາດຮັບໄດ້.

# Washington Apple Health (Medicaid)

## Apple Health ແມ່ນຫຍັງ?

Apple Health ແມ່ນຊື່ສຳລັບ Medicaid ໃນລັດວໍຊິງຕັນ. ມັນຄຸ້ມຄອງສິດຜົນປະໂຫຍດທີ່ຈຳເປັນທັງໝົດສຳລັບສຸຂະພາບ. ປະຊາຊົນຫຼາຍຄົນສາມາດໄດ້ຮັບ Apple Health ໂດຍບໍ່ເສຍຄ່າ. ບາງຄົນອາດຈຳເປັນຕ້ອງຈ່າຍເບ້ຍປະກັນປະຈຳເດືອນ.

ທ່ານສາມາດສະໝັກຂໍ Apple Health ໄດ້ທຸກເວລາຜ່ານ *Washington Healthplanfinder.*

## ຜູ້ໃດສາມາດໄດ້ຮັບ Apple Health?

ທ່ານສາມາດໄດ້ຮັບ Apple Health ຖ້າສິ່ງເຫຼົ່ານີ້ເປັນຈິງ. ສ້າງບັນຊີ ຫຼື ລົງທະບຽນເຂົ້າສູ່ *Washington Healthplanfinder* ຖ້າທ່ານບໍ່ຮູ້ວ່າທ່ານເຂົ້າເກນເງື່ອນໄຂ ຫຼື ບໍ່.

- ລາຍຮັບຂອງທ່ານຕ່ຳກວ່າ 138% ຂອງລະດັບຄວາມທຸກຍາກທີ່ກຳນົດໂດຍລັດຖະບານກາງ.
- ທ່ານເປັນພົນລະເມືອງຂອງສະຫະລັດ ຫຼື ຢູ່ໃນສະຫະລັດຢ່າງຖືກຕ້ອງຕາມກົດໝາຍເປັນເວລາຫ້າປີ.
- ທ່ານອາຍຸຕ່ຳກວ່າ 65 ປີ.

# ການເລືອກແຜນປະກັນສຸຂະພາບ

**ບໍ່ຕ້ອງສັບສົນ. ການຊອກຫາແຜນປະກັນທີ່ເໝາະສົມສາມາດເປັນສິ່ງທີ່ງ່າຍ.**

ມີຫຼາຍຢ່າງໃຫ້ຄິດ ເມື່ອກຳລັງເລືອກແຜນປະກັນສຸຂະພາບ. ທ່ານອາດເຂົ້າເກນເງື່ອນໄຂສຳລັບແຜນປະກັນຫຼາຍລາຍການ, ແຕ່ທ່ານບໍ່ແນ່ໃຈວ່າແຜນປະກັນໃດເໝາະສົມກັບຄວາມຕ້ອງການຂອງທ່ານທີ່ສຸດ. ແຜນປະກັນທີ່ແຕກຕ່າງກັນສະເໜີສິດຜົນປະໂຫຍດທີ່ແຕກຕ່າງກັນ. ແຜນປະກັນ Cascade Care ໃຊ້ຕົ້ນທຶນແບ່ງຈ່າຍເພື່ອສະເໜີສິດຜົນປະໂຫຍດທີ່ດີສຸດສຳລັບແຕ່ລະລະດັບປະເພດ.

ຄຳຖາມຂ້າງລຸ່ມສາມາດຊີ້ນຳທ່ານສູ່ແຜນປະກັນສຸຂະພາບທີ່ຖືກຕ້ອງ.




- **ຂ້າພະເຈົ້າສາມາດຂ່າຍຫຼາຍສ່ຳໃດຕໍ່ເດືອນ?**
  ເບ້ຍປະກັນປະຈຳເດືອນມີຄວາມແຕກຕ່າງກັນໃນບັນດາແຜນປະກັນສຸຂະພາບ.

- **ຂ້າພະເຈົ້າຈຳເປັນຕ້ອງເລືອກແພດດູແລເບິ່ງແຍງຫຼັກບໍ?**
  ແຜນປະກັນບາງລາຍການກຳນົດແພດໜຶ່ງຄົນໃຫ້ກັບທ່ານ.

- **ທ່ານໝໍຄົນປັດຈຸບັນຂອງຂ້າພະເຈົ້າຢູ່ໃນເຄືອຂ່າຍຂອງແຜນປະກັນບໍ?**
  ໃຫ້ແນ່ໃຈວ່າທ່ານໝໍຄົນປັດຈຸບັນຂອງທ່ານຢູ່ໃນການຄຸ້ມຄອງ.

- **ຂ້າພະເຈົ້າຈຳເປັນຕ້ອງມີໃບສົ່ງຕໍ່ເປັນລາຍລັກອັກສອນເພື່ອເຂົ້າພົບຜູ້ຊ່ຽວຊານບໍ?**
  ແຜນປະກັນບາງລາຍການຈຳເປັນຕ້ອງໃຊ້ໃບສົ່ງຕໍ່ເປັນລາຍລັກອັກສອນ.

- **ມັນງ່າຍສໍ່າໃດທີ່ຈະປ່ຽນທ່ານໝໍ?**
  ທ່ານອາດຕ້ອງການປ່ຽນທ່ານໝໍໃນອະນາຄົດ.

- **ມີເງິນສ່ວນທຳອິດບໍ?**
  ທ່ານຕ້ອງຈ່າຍເງິນສ່ວນທຳອິດຂອງທ່ານ ກ່ອນທີ່ແຜນປະກັນຂອງທ່ານຈະແບ່ງຈ່າຍຕົ້ນທຶນຂອງທ່ານ.

- **ແມ່ນຫຍັງຄືຕົ້ນທຶນຕົວຈິງສຳລັບແຜນປະກັນນີ້?**
  ຕົ້ນທຶນຕົວຈິງເຮັດໃຫ້ຈຳນວນເງິນເພີ່ມສູງຂຶ້ນ ເມື່ອມີການເຂົ້າພົບຢູ່ເລື້ອຍໆ.

- **ແຜນປະກັນນີ້ຮັບມືກັບການເຂົ້າປິ່ນປົວໃນຫ້ອງສຸກເສີນແນວໃດ?**
  ຮູ້ວ່າຈະເຮັດແນວໃດໃນກໍລະນີສຸກເສີນ.

- **ຂ້າພະເຈົ້າກຳລັງຄາດການວ່າຈະມີຄ່າໃຊ້ຈ່າຍທາງການແພດໃດໜຶ່ງໃນຈຳນວນທີ່ຫຼາຍບໍ?**
  ທ່ານອາດຕ້ອງການການຄຸ້ມຄອງເພີ່ມເຕີມ ຖ້າທ່ານກຳລັງຄາດການວ່າຈະມີລູກ ຫຼື ມີຄ່າໃຊ້ຈ່າຍອື່ນໆໃນຈຳນວນເງິນທີ່ຫຼາຍ.

# Cascade Care

## ແຜນປະກັນ Cascade Care ແມ່ນຫຍັງ?

ແຜນປະກັນ Cascade Care ແມ່ນປະເພດຂອງແຜນປະກັນສຸຂະພາບທີ່ຜ່ານຄຸນສົມບັດ ເຊິ່ງມີໃຫ້ຜ່ານ *Washington Healthplanfinder.* ພວກເຂົາຄຸ້ມຄອງສິດຜົນປະໂຫຍດທີ່ຈຳເປັນສຳລັບສຸຂະພາບ ແລະ ສະເໜີການບໍລິການ ແລະ ປະຢັດເງິນໄດ້ຫຼາຍກວ່າແຜນປະກັນຫຼາຍລາຍການ.

ມີແຜນປະກັນ Cascade Care ປະເພດ: ແຜນປະກັນ Cascade ແລະ ແຜນປະກັນ Cascade Select. ແຜນປະກັນ Cascade Select ຕ້ອງເຂົ້າເກນມາດຕະຖານທີ່ສູງຂຶ້ນ. ພວກມັນສະເໜີຄຸນນະພາບ ແລະ ຄຸນຄ່າທີ່ສູງກວ່າແຜນປະກັນອື່ນໆ.

## ເປັນຫຍັງຂ້າພະເຈົ້າຈຶ່ງຄວນເລືອກແຜນປະກັນ Cascade Care?

ແຜນປະກັນ Cascade Care ສະເໜີການຄຸ້ມຄອງຫຼາຍຂຶ້ນສຳລັບຕົ້ນທຶນທີ່ໜ້ອຍລົງ. ພວກມັນປະກອບມີການບໍລິການຫຼາຍກວ່າແຜນປະກັນສ່ວນໃຫຍ່ ກ່ອນທີ່ທ່ານຕ້ອງຈ່າຍເງິນສ່ວນທຳອິດ. ສິ່ງນີ້ປະກອບມີການດູແລເບິ່ງແຍງຫຼັກ, ການບໍລິການສຳລັບສຸຂະພາບຈິດ, ຢາທົ່ວໄປ ແລະ ອື່ນໆອີກ.

ທ່ານຍັງປະຢັດຕົ້ນທຶນຕົວຈິງ. ໂດຍສະເລ່ຍແລ້ວ, ເງິນສ່ວນທຳອິດຂອງທ່ານແມ່ນຈະໜ້ອຍລົງ $1,000 ເມື່ອທ່ານເລືອກແຜນປະກັນ Cascade Care.

## ແຜນປະກັນ Cascade Care ເຮັດວຽກແນວໃດ?

ແຜນປະກັນ Cascade Care ໃຊ້ການອອກແບບຕົ້ນທຶນແບ່ງຈ່າຍໂດຍມາດຕະຖານ. ສິ່ງນີ້ໝາຍຄວາມເຖິງສອງສາມສິ່ງ. ກ່ອນອື່ນ, ຕົ້ນທຶນຕົວຈິງຍັງຢູ່ສ່ຳເກົ່າສຳລັບບັນດາບໍລິສັດ. ແຜນປະກັນ Cascade Care ທັງໝົດໃນແຕ່ລະລະດັບປະເພດຮ່ວມຈ່າຍເງິນສ່ວນທຳອິດ, ເງິນຮ່ວມຈ່າຍ ແລະ ເງິນປະກັນໄພຮ່ວມສ່ຳກັນ.

ຢ່າງທີສອງ, ແຜນປະກັນ Cascade Care ແບ່ງຈ່າຍການຄຸ້ມຄອງສ່ຳກັນ. ພວກມັນປະກອບມີການບໍລິການສ່ຳກັນກ່ອນທີ່ຈະຈ່າຍເງິນສ່ວນທຳອິດ. ທ່ານສາມາດສະບາຍໃຈ ໂດຍຮູ້ວ່າທ່ານມີການຄຸ້ມຄອງທີ່ດີສຸດເທົ່າທີ່ມີໃຫ້.

## ທາງເລືອກເພີ່ມຂຶ້ນ. ຄຸນຄ່າເພີ່ມຂຶ້ນ.

ແຜນປະກັນ Cascade ແລະ Cascade Select ໃຫ້ທ່ານມີທາງເລືອກເພີ່ມຂຶ້ນ ແລະ ຄຸນຄ່າເພີ່ມຂຶ້ນ. ການອອກແບບຕົ້ນທຶນແບ່ງຈ່າຍໂດຍມາດຕະຖານຂອງພວກມັນຮັບປະກັນວ່າທ່ານຈະໄດ້ຮັບການຄຸ້ມຄອງທີ່ດີສຸດເທົ່າທີ່ທ່ານສາມາດໄດ້ຮັບ.

ແຜນປະກັນ Cascade Care ແມ່ນມີໃຫ້ຜ່ານ *Washington Healthplanfinder* ເທົ່ານັ້ນ. ລົງທະບຽນເຂົ້າບັນຊີຂອງທ່ານເພື່ອກວດເບິ່ງວ່າທ່ານເຂົ້າເກນເງື່ອນໄຂ ຫຼື ບໍ່.



## ແຜນປະກັນທີ່ມີໃຫ້ທີ່ *Washington Healthplanfinder*

| | ແຜນປະກັນທີ່ບໍ່ແມ່ນ Cascade | ແຜນປະກັນ Cascade | ແຜນປະກັນ Cascade ຊັ້ນໜຶ່ງ |
|---|---|---|---|
| ເຂົ້າເກນເງື່ອນໄຂສຳລັບເຄຣດິດອາກອນ | ✓ | ✓ | ✓ |
| ມີສິດໄດ້ຮັບ Cascade Care Savings | | ✓ | ✓ |
| ແຜນປະກັນສຸຂະພາບທີ່ເຂົ້າເກນຄຸນສົມບັດ (ຕ້ອງບັນລຸມາດຕະຖານຄຸນນະພາບ) | ✓ | ✓ | ✓ |
| ຄອບຄຸມສິດທິປະໂຫຍດສຸຂະພາບສິບຢ່າງທີ່ຈຳເປັນ | ✓ | ✓ | ✓ |
| ການຈ່າຍຄ່າໃຊ້ຈ່າຍຮ່ວມທີ່ເປັນມາດຕະຖານ (ແຜນປະກັນຮ່ວມຈ່າຍຈຳນວນເງິນສ່ວນທຳອິດ, ການຈ່າຍຮ່ວມ ແລະ ການປະກັນໄພຮ່ວມແບບດຽວກັນ) | | ✓ | ✓ |
| ຄຸ້ມຄອງການດູແລເບິ່ງແຍງເບື້ອງຕົ້ນ, ການດູແລເບິ່ງແຍງສຸກເສີນ, ການດູແລເບິ່ງແຍງສຸຂະພາບຈິດ, ຢາທົ່ວໄປ ແລະ ອື່ນໆອີກ ກ່ອນທີ່ຈະຮອດເກນຈຳນວນເງິນສ່ວນທຳອິດ | | ✓ | ✓ |
| ສະເໜີໃຫ້ໂດຍ *Washington Healthplanfinder* ເທົ່ານັ້ນ | | ✓ | ✓ |
| ສະເໜີໃຫ້ໃນທຸກເຂດປົກຄອງໃນລັດວໍຊິງຕັນ | ✓ | ✓ | |

# ສະໝັກຂໍໄດ້ເມື່ອໃດ

### ຂ້າພະເຈົ້າສາມາດສະໝັກຂໍແຜນປະກັນສຸຂະພາບໄດ້ເມື່ອໃດ?

ທ່ານສາມາດສະໝັກຂໍແຜນປະກັນສຸຂະພາບລະຫວ່າງການລົງທະບຽນແບບເປີດ. ການລົງທະບຽນແບບເປີດແມ່ນເວລາໃນປີທີ່ສາມາດເລືອກຊື້ແຜນປະກັນສຸຂະພາບທີ່ຜ່ານຄຸນສົມບັດ ແລະ ແຜນປະກັນທັນຕະກໍາທີ່ຜ່ານຄຸນສົມບັດໃນ *Washington Healthplanfinder*. ມັນເລີ່ມຕົ້ນຕັ້ງແຕ່ວັນທີ 1 ພະຈິກຂອງແຕ່ລະປີ.

### ມັນຈະເກີດຫຍັງຂຶ້ນ ຖ້າຂ້າພະເຈົ້າຕ້ອງການການຄຸ້ມຄອງກ່ອນການລົງທະບຽນແບບເປີດ?

ການປ່ຽນແປງບາງຢ່າງໃນຊີວິດເຮັດໃຫ້ທ່ານລົງທະບຽນສໍາລັບແຜນປະກັນສຸຂະພາບໃນເວລາໃດໜຶ່ງໃນປີ. ນີ້ແມ່ນການລົງທະບຽນແບບພິເສດ. ທ່ານສາມາດສະໝັກຂໍການລົງທະບຽນແບບພິເສດຈົນເຖິງ 60 ວັນ ຫຼັງຈາກທີ່ເຫດການຊີວິດທີ່ເຂົ້າເກນເງື່ອນໄຂໄດ້ເກີດຂຶ້ນ.

#### ເຫດການຊີວິດທີ່ເຂົ້າເກນເງື່ອນໄຂ

- ການແຕ່ງດອງ
- ການເຂົ້າຮ່ວມມາຢູ່ເຮືອນຫຼັງດຽວກັນ
- ການເກີດລູກ
- ການດູແລເບິ່ງແຍງສໍາລັບເດັກທີ່ຮັບມາລ້ຽງ ຫຼື ເດັກອຸປະຖໍາ
- ການກະສຽນກ່ອນກໍານົດ
- ການສູນເສຍເດັກນ້ອຍຢູ່ໃນການຄຸ້ມຄອງ ຫຼື ສະຖານະເພິ່ງພາອາໄສຄົນອື່ນ ເນື່ອງຈາກການເສຍຊີວິດ, ການຢ່າຮ້າງ ຫຼື ການແຍກກັນຢູ່ທີ່ຖືກຕ້ອງຕາມກົດໝາຍ
- ການປ່ຽນແປງລາຍຮັບ
- ການສູນເສຍປະກັນສຸຂະພາບອື່ນໆ
- ການສູນເສຍການຄຸ້ມຄອງ COBRA ທີ່ບໍ່ເສຍຄ່າ
- ການຍ້າຍໄປອາໄສຢູ່ໃນລັດວໍຊິງຕັນ
- ການຍ້າຍໄປອາໄສຢູ່ໃນເຂດປົກຄອງໃໝ່
- ການປ່ຽນແປງພົນລະເມືອງ ຫຼື ສະຖານະຢູ່ອາໄສທີ່ຖືກຕ້ອງຕາມກົດໝາຍ
- ການອອກຈາກຄຸກ
- ການໄດ້ຮັບຄໍາສັ່ງສານ (ລວມເຖິງການຊ່ວຍເຫຼືອເດັກ)

## ຄົວເຮືອນທີ່ມີລາຍຮັບຕໍ່າ

ຄົວເຮືອນທີ່ມີລາຍຮັບຕໍ່າສາມາດສະໝັກຂໍການລົງທະບຽນແບບພິເສດໄດ້ທຸກເວລາ. ເຫດການຊີວິດທີ່ເຂົ້າເກນເງື່ອນໄຂແມ່ນບໍ່ຈຳເປັນຕ້ອງມີ. ທ່ານຕ້ອງມີລາຍຮັບຕໍ່າກວ່າ 250% ຂອງລະດັບຄວາມທຸກຍາກທີ່ກຳນົດໂດຍລັດຖະບານກາງ ເພື່ອຮັບເອົາສິດຜົນປະໂຫຍດນີ້.

## ບຸກຄົນໃນ AI/AN ແລະ ສະມາຊິກເຜົ່າ

ກົດລະບຽບການລົງທະບຽນບໍ່ສາມາດໃຊ້ໄດ້ກັບສະມາຊິກເຜົ່າ ແລະ ຫຸ້ນສ່ວນໃນບໍລິສັດຂອງຄົນພື້ນເມືອງໃນລັດອາລັດສະກາ. ທ່ານສາມາດລົງທະບຽນໄດ້ທຸກເວລາໃນປີ. ທ່ານຍັງສາມາດປ່ຽນແຜນປະກັນຂອງທ່ານໜຶ່ງຄັ້ງຕໍ່ເດືອນ ຖ້າທ່ານເລືອກ.



# ລາຍການກວດກາສຳລັບການສະໝັກຂໍ

### ຂ້າພະເຈົ້າຈຳເປັນຕ້ອງມີຫຍັງເພື່ອສະໝັກຂໍ?

*Washington Healthplanfinder* ຈຳເປັນຕ້ອງໃຊ້ຂໍ້ມູນພື້ນຖານກ່ຽວກັບທ່ານ ເມື່ອທ່ານສະໝັກຂໍແຜນປະກັນສຸຂະພາບ. ໃຫ້ໃຊ້ລາຍການກວດກາຂ້າງລຸ່ມເພື່ອຮັບປະກັນວ່າທ່ານມີສິ່ງທີ່ທ່ານຕ້ອງການ.

- ✓ **ຊື່ ແລະ ວັນເດືອນປີເກີດທີ່ຖືກຕ້ອງຕາມກົດໝາຍ**
ທ່ານຈຳເປັນຕ້ອງມີຊື່ ແລະ ວັນເດືອນປີເກີດທີ່ຖືກຕ້ອງຕາມກົດໝາຍຂອງແຕ່ລະຄົນທີ່ກຳລັງສະໝັກຂໍການຄຸ້ມຄອງ.

- ✓ **ໝາຍເລກປະກັນສັງຄົມ**
ໃຫ້ກຽມພ້ອມໝາຍເລກປະກັນສັງຄົມສຳລັບແຕ່ລະຄົນທີ່ກຳລັງສະໝັກຂໍ ຖ້າພວກເຂົາມີ. ທ່ານຍັງສາມາດສະໝັກຂໍ ຖ້າທ່ານບໍ່ມີ.

- ✓ **ສະຖານະທີ່ບໍ່ແມ່ນພົນລະເມືອງ**
ພວກເຮົາອາດຈຳເປັນຕ້ອງຮູ້ກ່ຽວກັບສະຖານະຂອງທ່ານ ຖ້າທ່ານບໍ່ແມ່ນພົນລະເມືອງ. ທ່ານ ຫຼື ສະມາຊິກໃນຄອບຄົວຂອງທ່ານຍັງສາມາດໄດ້ຮັບການຄຸ້ມຄອງ ຖ້າຕົກຢູ່ໃນກໍລະນີນີ້.

- ✓ **ສະຖານະລາຍຮັບ ແລະ ການຍື່ນອາກອນ**
ເກັບກຳຂໍ້ມູນໃດໜຶ່ງກ່ຽວກັບລາຍຮັບທີ່ທ່ານມີສຳລັບແຕ່ລະຄົນທີ່ກຳລັງສະໝັກຂໍ. ສິ່ງນີ້ສາມາດລວມເຖິງແບບຟອມ W-2 ແລະ ແບບລາຍການສະແດງອາກອນ.

- ✓ **ຂໍ້ມູນປະກັນໄພອື່ນໆ**
ທ່ານອາດມີທາງເລືອກປະກັນສຸຂະພາບອື່ນໆ ເຊັ່ນ: Medicare, Tri-Care ຫຼື ການຄຸ້ມຄອງທີ່ອີງໃສ່ອາຊີບ. ເກັບກຳຂໍ້ມູນນີ້ ເມື່ອທ່ານສະໝັກຂໍ.

# ວິທີການສະໝັກຂໍ

### ຂ້າພະເຈົ້າມີທຸກສິ່ງທີ່ຂ້າພະເຈົ້າຈໍາເປັນຕ້ອງມີ! ແລ້ວເຮັດແນວໃດຕໍ່?

ທ່ານສາມາດສະໝັກຂໍການຄຸ້ມຄອງໃນ wahealthplanfinder.org, ແອັບ WAPlanfinder ຫຼື ທາງໂທລະສັບ.

**ລົງທະບຽນທາງອອນລາຍທີ່ wahealthplanfinder.org**

ສ້າງບັນຊີ, ເລືອກຊື້ແຜນປະກັນສຸຂະພາບ ແລະ ຂໍ້ມູນທີ່ເປັນປະໂຫຍດໃນ wahealthplanfinder.org.

**ໂທຫາພວກເຮົາທີ່ 1-855-923-4633**

ຝ່າຍບໍລິການລູກຄ້າແມ່ນພ້ອມໃຫ້ບໍລິການທາງໂທລະສັບ ນັບຕັ້ງແຕ່ 7:30 ເຊົ້າ ຫາ 5:30 ແລງ. ວັນຈັນ ຫາວັນສຸກ.

**ດາວໂຫຼດແອັບ WAPlanfinder**

ແອັບມືຖືຂອງພວກເຮົາແມ່ນມີໃຫ້ໃນ Apple App Store ແອັບ Google Play.

## ກົດ. ປຽບທຽບ. ຮັບການຄຸ້ມຄອງ.

ມັນງ່າຍທີ່ຈະຊອກຫາແຜນປະກັນທີ່ເໝາະສົມກັບຄວາມຕ້ອງການຂອງທ່ານຜ່ານ *Washington Healthplanfinder.* ບໍ່ວ່າທ່ານຈະໃຊ້ wahealthplanfinder.org ຫຼື ແອັບ WAPlanfinder, ໃຫ້ປະຕິບັດຕາມຂັ້ນຕອນງ່າຍໆເຫຼົ່ານີ້.

1 **ເລືອກຊື້ ແລະ ປຽບທຽບ.** ລະບຸອາຍຸຂອງທ່ານ, ການສູບຢາ ແລະ ລາຍຮັບໂດຍຄາດຄະເນ. ທ່ານຈະໄດ້ຮັບລາຍຊື່ແຜນປະກັນສຸຂະພາບທີ່ທ່ານສາມາດໄດ້ຮັບ ແລະ ເບ້ຍປະກັນຂອງພວກມັນ.

2 **ສະໝັກຂໍ.** ໃສ່ຂໍ້ມູນເພີ່ມເຕີມ, ເຊັ່ນ: ສະຖານະການຍື່ນອາກອນ ແລະ ແຫຼ່ງລາຍຮັບ. ສິ່ງນີ້ຈະເຮັດໃຫ້ທ່ານໄດ້ກວດເບິ່ງວ່າທ່ານເຂົ້າເກນເງື່ອນໄຂສຳລັບການຊ່ວຍເຫຼືອທາງການເງິນ, Washington Apple Health (Medicaid) ຫຼື ແຜນປະກັນສຸຂະພາບທີ່ຜ່ານຄຸນສົມບັດ ຫຼື ບໍ່.

3 **ເລືອກແຜນປະກັນ.** ທ່ານອາດມີຫຼາຍທາງເລືອກໂດຍອີງໃສ່ສະຖານະການຂອງທ່ານ. ໃຫ້ເລືອກແຜນປະກັນທີ່ດີສຸດສຳລັບທ່ານ ແລະ ຄວາມຕ້ອງການໃນຄອບຄົວຂອງທ່ານ.

4 **ຮັບການຄຸ້ມຄອງ.** ຫຼັງຈາກທີ່ທ່ານຢືນຢັນແຜນປະກັນສຸຂະພາບທີ່ທ່ານເລືອກ, ທ່ານຈະໄດ້ຮັບການຄຸ້ມຄອງໃນໄວໆ. ຈ່າຍເບ້ຍປະກັນສ່ວນທຳອິດຂອງທ່ານກ່ອນ ເມື່ອທ່ານໄດ້ຮັບໃບບິນ ເພື່ອເລີ່ມການຄຸ້ມຄອງ. ທ່ານຈະໄດ້ຮັບບັດປະກັນໄພຈາກບໍລິສັດທີ່ທ່ານໄດ້ເລືອກ.

## ຮັບຄວາມຊ່ວຍເຫຼືອກັບການສະໝັກຂໍຂອງທ່ານ.

ພວກເຮົາຮ່ວມມືກັບຜູ້ຊ່ຽວຊານທ້ອງຖິ່ນທີ່ສາມາດຊີ້ນຳທ່ານຕະຫຼອດຂະບວນການລົງທະບຽນ. ຜູ້ຊ່ຽວຊານເຫຼົ່ານີ້ສາມາດຖືກເອີ້ນວ່ານາຍໜ້າ ແລະ ຜູ້ນຳທາງ. ຄົນເຫຼົ່ານີ້ສາມາດຕອບຄຳຖາມຂອງທ່ານກ່ຽວກັບແຜນປະກັນສຸຂະພາບ ຫຼື ວິທີການລົງທະບຽນ. ພວກເຂົາຍັງສາມາດບອກທ່ານວ່າ ທ່ານເຂົ້າເກນເງື່ອນໄຂສຳລັບການຊ່ວຍເຫຼືອທາງການເງິນ ຫຼື ບໍ່.

ໂດຍທົ່ວໄປແລ້ວ, ການຊ່ວຍເຫຼືອຈາກນາຍໜ້າ ແລະ ຜູ້ນຳທາງແມ່ນບໍ່ເສຍຄ່າ. ຊອກຫານາຍໜ້າ ແລະ ຜູ້ນຳທາງຄົນໃດໜຶ່ງໃນບໍລິເວນພື້ນທີ່ຂອງທ່ານທີ່ wahealthplanfinder.org ຫຼື ໃນແອັບ WAPlanfinder.

## ສູນລົງທະບຽນກັບຜູ້ນຳທາງ ແລະ ນາຍໜ້າໃນແຕ່ລະເມືອງ

**Bellingham**
ບໍລິສັດປະກັນໄພ Rice (Rice Insurance)
1400 Broadway Street, Bellingham, WA 98225
*ໂທລະສັບ:* 1-360-734-1161
*ອີເມວ:* keith@riceinsurance.com

---

**Everett**
ບໍລິສັດ ການຕອບໂຈດປະກັນສຸຂະພາບ NW ຈຳກັດ (Health Insurance Solutions NW, LLC)
7003 Evergreen Way, Suite B, Everett, WA 98203
*ໂທລະສັບ:* 1-425-252-5105
*ອີເມວ:* neil@his-nw.com

---

**Federal Way**
ໜ່ວຍງານສາທາລະນະສຸກປະຈຳເມືອງ Seattle ແລະ ເຂດປົກຄອງ King
(Public Health Seattle & King County)
1640 S 318th Place, Federal Way, WA 98003
*ໂທລະສັບ:* 1-800-756-5437
*ອີເມວ:* chap@kingcounty.gov

---

**Kennewick**
ກຸ່ມທີ່ປຶກສາສຳລັບສິດຜົນປະໂຫຍດສຸຂະພາບ (Advisor Health Benefits Group)
1446 Spaulding Ave, Suite 302, Richland, WA 99352
*ໂທລະສັບ:* 1-509-524-9611
*ອີເມວ:* kevin@advisorhealthbenefits.com

---

**Seattle**
ບໍລິສັດອອກແບບທາງການເງິນ (Financial Designs)
2723 California Avenue SW, Seattle, WA 98116
*ໂທລະສັບ:* 1-425-392-7390
*ອີເມວ:* cmcclure@financialdesignsinsurance.com

**Spokane**
ສູນລົງທະບຽນສ້າງສຸຂະພາບທີ່ດີຮ່ວມກັນ (Better Health Together Enrollment Center)
157 S Howard, Ste 102, Spokane, WA 99201
*ໂທລະສັບ:* 1-509-370-5605
*ອີເມວ:* bhtnavigatorstaff@BetterHealthTogether.org
*ເວບໄຊ:* www.betterhealthtogether.org/navigators

---

**Tacoma**
ບໍລິສັດ FND ປະກັນໄພ ແລະ ການບໍລິການທາງການເງິນ ຈໍາກັດ
(FND Insurance & Financial Services, LLC)
5515 Steilacoom Blvd SW, Suite 122, Lakewood, WA 98499
*ໂທລະສັບ:* 1-253-302-5579
*ອີເມວ:* teamfnd@fndinsurance.com

---

**Vancouver**
ບໍລິສັດທີມປະກັນໄພປະຍຸກໃຊ້ (Applied Team Insurance)
8513 NE Hazel Dell Avenue, Suite 101, Vancouver, WA 98665
*ໂທລະສັບ:* 1-360-726-6092
*ອີເມວ:* marlena@appliedteamins.com

---

**Wenatchee**
ບໍລິສັດປະກັນສຸຂະພາບ Suzie (Suzie Health Insurance)
413 N Mission Street, Wenatchee, WA 98801
*ໂທລະສັບ:* 1-509-295-9055
*ອີເມວ:* info@wahbroker.org

---

**Yakima**
ໜ່ວຍງານສຸຂະພາບໃນພື້ນທີ່ Yakima (Yakima Neighborhood Health Services)
610 Yakima East Avenue, Yakima, WA 98901
*ໂທລະສັບ:* 1-509-853-2377
*ອີເມວ:* navigators@ynhs.org

## ສູນລົງທະບຽນກັບຜູ້ນຳທາງໂດຍເຂດປົກຄອງ

**ເຂດປົກຄອງ Adams, Ferry, Lincoln, Pend Oreille, Spokane, Stevens ຫຼື Whitman**
ໜ່ວຍງານສ້າງສຸຂະພາບທີ່ດີຂື້ນຮ່ວມກັນ (Better Health Together)
*ໂທລະສັບ:* 1-509-381-5573
*ອີເມວ:* bhtnavigatorstaff@BetterHealthTogether.org
*ເວບໄຊ:* www.betterhealthtogether.org/navigators

---

**ເຂດປົກຄອງ King, Clallam ຫຼື Jefferson**
ໜ່ວຍງານສາທາລະນະສຸກປະຈຳເມືອງ Seattle ແລະ ເຂດປົກຄອງ King
(Public Health Seattle & King County)
*ໂທລະສັບ:* 1-800-756-5437
*ອີເມວ:* chap@kingcounty.gov

---

**ເຂດປົກຄອງ King, Pierce, Snohomish ຫຼື Thurston**
ສະມາຄົມແມ່ຍິງເກົາຫຼີ (Korean Women's Association)
*ໂທລະສັບ:* 253-535-4202
*ເວບໄຊ:* www.kwacares.org

---

**ເຂດປົກຄອງ Chelan, Douglas, Grant ຫຼື Okanogan**
ໜ່ວຍງານດູແລສຸຂະພາບຂອງປະຊາຊົນ/ໂຮງໝໍເມືອງ Wenatchee Valley
(Confluence Health/Wenatchee Valley Hospital)
*ໂທລະສັບ:* 1-509-433-3383
*ອີເມວ:* sm_ch_lead_org@confluencehealth.org

---

**ເຂດປົກຄອງ Kitsap**
ໜ່ວຍງານບໍລິການສຸຂະພາບຊຸມຊົນໃນແຫຼມ
(Peninsula Community Health Services)
*ໂທລະສັບ:* 1-360-377-3776
*ອີເມວ:* eligibility@pchsweb.org

---

**ເຂດປົກຄອງ Clark, Cowlitz, Grays Harbor, Klickitat, Lewis, Mason, Pacific, Pierce, Thurston, Snohomish, Skagit, Skamania, Wahkiakum ຫຼື Whatcom**
ສູນສຸຂະພາບຊຸມຊົນ Sea Mar (Sea Mar Community Health Centers)
*ໂທລະສັບ:* 1-855-289-4503
*ອີເມວ:* seamaripa@seamarchc.org

**ເຂດປົກຄອງ Asotin, Benton, Columbia, Franklin, Garfield ຫຼື Walla Walla**
ໜ່ວຍງານຊຸມຊົນສາມເມືອງ (Tri-Cities Community Health)
*ໂທລະສັບ:* 1-509-543-1952
*ອີເມວ:* enrollmentHBE@mytcch.org
*ເວບໄຊ:* www.mytcch.org

---

**ເຂດປົກຄອງ Kittitas ຫຼື Yakima**
ໜ່ວຍງານສຸຂະພາບໃນພື້ນທີ່ Yakima (Yakima Neighborhood Health Services)
*ໂທລະສັບ:* 1-509-853-2377
*ອີເມວ:* navigators@ynhs.org




# ຕິດຕາມ ພວກເຮົາ!

ພວກເຮົາແບ່ງປັນຂໍ້ມູນທີ່ເປັນປະໂຫຍດ ແລະ ຂໍ້ມູນອັບເດດກ່ຽວກັບການລົງທະບຽນໃນຊ່ອງທາງສື່ສັງຄົມອອນລາຍເຫຼົ່ານີ້.

- Washington Healthplanfinder
- waplanfinder
- waplanfinder

washington
healthplanfinder
click. compare. covered.

wahealthplanfinder.org
1-855-WAFINDER | 1-855-923-4633